**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ... ກົມ... ເລກທີ: 0308 ວັນທີ: 10/3/16

ນາຍົກລັດຖະມົນຕີ

ເລກທີ 64 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 4 3 2016

ເລກທີ 0462 ວັນທີ 07/03/16

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງສະພາການສຶກສາຊັ້ນສູງແຫ່ງຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບປັບປຸງເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;
- ອີງຕາມກົດໝາຍວ່າດ້ວຍການສຶກສາ ສະບັບປັບປຸງເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມດຳລັດວ່າດ້ວຍການສຶກສາຊັ້ນສູງ ສະບັບເລກທີ 177/ລບ, ລົງວັນທີ 05 ມິຖຸນາ 2015;
- ອີງຕາມໜັງສືສະເໜີຂອງ ກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1312/ສສກ.ຊສ, ລົງວັນທີ 27 ພະຈິກ 2015;
- ອີງຕາມໃບສະເໜີຂອງ ກະຊວງພາຍໃນ ສະບັບເລກທີ 14/ພນ, ລົງວັນທີ 15 ມັງກອນ 2016.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງທາງດ້ານນິຕິກຳໃຫ້ແກ່ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະພາການສຶກສາຊັ້ນສູງແຫ່ງຊາດ, ແນໃສ່ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ໃນການພັດທະນາຊັບພະຍາກອນມະນຸດ, ການຄົ້ນຄວ້າວິທະຍາສາດ ແລະ ພັດທະນາເຕັກໂນໂລຊີ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ສະພາການສຶກສາຊັ້ນສູງແຫ່ງຊາດ (ຂຽນຫຍໍ້ວ່າ: ສພສຊ) ເປັນອົງການຈັດຕັ້ງທີ່ບໍ່ປະຈຳການ ຊຶ່ງມີຈຸດປະສານງານລວມ ແລະ ມີກອງເລຂາປະຈຳຢູ່ກະຊວງສຶກສາທິການ ແລະ ກິລາ, ມີພາລະບົດບາດເປັນເສນາທິການ ໃນການໃຫ້ຄຳປຶກສາແກ່ລັດຖະບານ ກ່ຽວກັບການເຄື່ອນໄຫວທາງວິຊາການຂອງ ສະຖາບັນການສຶກສາຊັ້ນສູງ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ສະພາການສຶກສາຊັ້ນສູງແຫ່ງຊາດມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ເພື່ອນໍາສະເໜີລັດຖະບານ ສ້າງຕັ້ງ, ຂະຫຍາຍ ແລະ ຍຸບເລີກສະຖາບັນການສຶກສາຊັ້ນສູງລະດັບຊາດ ແລະ ນານາຊາດ;
2. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ເພື່ອນໍາສະເໜີລັດຖະບານ ແຕ່ງຕັ້ງຕໍາແໜ່ງວິຊາການຂອງຄູຂັ້ນສາດສະດາຈານ ແລະ ຮອງສາດສະດາຈານ;
3. ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງຫົວຂໍ້ ແລະ ຜົນການຄົ້ນຄວ້າວິທະຍາສາດລະດັບຊາດຂອງ ສະຖາບັນການສຶກສາຊັ້ນສູງ;
4. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

ສະພາການສຶກສາຊັ້ນສູງແຫ່ງຊາດ ມີຂອບເຂດສິດ ດັ່ງນີ້:

1. ສະເໜີລັດຖະບານ ກ່ຽວກັບການສ້າງຕັ້ງ, ຂະຫຍາຍ ແລະ ຍຸບເລີກສະຖາບັນການສຶກສາຊັ້ນສູງລະດັບຊາດ ແລະ ນານາຊາດ;
2. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ, ປົດ ແລະ ຖອນຕໍາແໜ່ງວິຊາການຂອງ ຄູຂັ້ນສາດສະດາຈານ ແລະ ຮອງສາດສະດາຈານ;
3. ຮັບຮອງຫົວຂໍ້ ແລະ ຜົນການຄົ້ນຄວ້າວິທະຍາສາດລະດັບຊາດ ທີ່ຕິດພັນກັບການຈັດຕັ້ງຜັນຂະຫຍາຍແນວທາງຂອງລັດຖະບານ ໃນການພັດທະນາຊັບພະຍາກອນມະນຸດ, ການພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
4. ອອກຂໍ້ກໍານົດຂອງ ສະພາການສຶກສາຊັ້ນສູງແຫ່ງຊາດ;
5. ແຕ່ງຕັ້ງກໍາມາທິການຝ່າຍຕ່າງໆ ຕາມຄວາມຈໍາເປັນ;
6. ນໍາໃຊ້ງົບປະມານຂອງລັດ ແລະ ການປະກອບສ່ວນຂອງ ສະຖາບັນການສຶກສາຊັ້ນສູງ ແລະ ຜູ້ໃຫ້ທຶນທັງພາຍໃນ ແລະ ຕ່າງປະເທດ;
7. ປະຕິບັດສິດອື່ນໆ ທີ່ລັດຖະບານມອບໝາຍໃຫ້ສະເພາະ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 5 ໂຄງປະກອບທາງດ້ານບຸກຄະລາກອນ**

5.1. ສະພາການສຶກສາຊັ້ນສູງແຫ່ງຊາດ ປະກອບດ້ວຍປະທານ, ຮອງປະທານ ແລະ ກໍາມະການ ຊຶ່ງຕາງໜ້າແຕ່ລະພາກສ່ວນໂດຍຕໍາແໜ່ງຄື ດັ່ງລຸ່ມນີ້:

1. ທ່ານ ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ເປັນປະທານ;
2. ທ່ານ ລັດຖະມົນຕີວ່າການ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ເປັນຮອງປະທານ;

| | | |
|---|---|---|
| 3. | ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງສຶກສາທິການ ແລະ ກິລາ | ເປັນຮອງປະທານ, ຜູ້ປະຈໍາການ; |
| 4. | ທ່ານ ລັດຖະມົນຕີຊ່ວຍວ່າການ ກະຊວງພາຍໃນ | ເປັນກໍາມະການ; |
| 5. | ທ່ານ ຮອງຫົວໜ້າຄະນະຈັດຕັ້ງສູນກາງພັກ | ເປັນກໍາມະການ; |
| 6. | ທ່ານ ຫົວໜ້າສະຖາບັນການເມືອງ-ການປົກຄອງແຫ່ງຊາດ | ເປັນກໍາມະການ; |
| 7. | ທ່ານ ຫົວໜ້າສະຖາບັນວິທະຍາສາດສັງຄົມແຫ່ງຊາດ | ເປັນກໍາມະການ; |
| 8. | ທ່ານ ອະທິການບໍດີມະຫາວິທະຍາໄລແຫ່ງຊາດ | ເປັນກໍາມະການ; |
| 9. | ທ່ານ ອະທິການບໍດີມະຫາວິທະຍາໄລຈໍາປາສັກ | ເປັນກໍາມະການ; |
| 10. | ທ່ານ ອະທິການບໍດີມະຫາວິທະຍາໄລສຸພານຸວົງ | ເປັນກໍາມະການ; |
| 11. | ທ່ານ ອະທິການບໍດີມະຫາວິທະຍາໄລສະຫວັນນະເຂດ | ເປັນກໍາມະການ; |
| 12. | ທ່ານ ອະທິການບໍດີມະຫາວິທະຍາໄລວິທະຍາສາດສຸຂະພາບ | ເປັນກໍາມະການ; |
| 13. | ທ່ານ ຜູ້ອໍານວຍການວິທະຍາຄານປ້ອງກັນຊາດໄກສອນພົມວິຫານ | ເປັນກໍາມະການ; |
| 14. | ທ່ານ ຜູ້ອໍານວຍການວິທະຍາຄານປ້ອງກັນຄວາມສະຫງົບແຫ່ງຊາດ | ເປັນກໍາມະການ; |
| 15. | ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກໍາ ແຫ່ງຊາດ | ເປັນກໍາມະການ; |
| 16. | ທ່ານ ຜູ້ຊົງຄຸນວຸດທິ 3 ທ່ານ | ເປັນກໍາມະການ; |
| 17. | ທ່ານ ຫົວໜ້າກົມການສຶກສາຊັ້ນສູງ | ເປັນກໍາມະການ; |
| 18. | ທ່ານ ຫົວໜ້າຫ້ອງການສະພາວິທະຍາສາດແຫ່ງຊາດ | ເປັນກໍາມະການ; |
| 19. | ທ່ານ ປະທານສະມາຄົມການສຶກສາພາກເອກະຊົນ | ເປັນກໍາມະການ; |
| 20. | ທ່ານ ຫົວໜ້າຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ | ເປັນຫົວໜ້າກອງເລຂາ. |

5.2. ສໍາລັບກໍາມະການຜູ້ຊົງຄຸນວຸດທິ ປະກອບມີ 3 ທ່ານນັ້ນ ມອບໃຫ້ ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ເປັນຜູ້ພິຈາລະນາແຕ່ງຕັ້ງ ຕາມຄວາມເໝາະສົມ.

**ມາດຕາ 6 ກົງຈັກການຈັດຕັ້ງ**

ສະພາການສຶກສາຊັ້ນສູງແຫ່ງຊາດ ມີຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ ເປັນກົງຈັກຊ່ວຍວຽກ (ກອງເລຂາ) ຂຶ້ນກັບກົມການສຶກສາຊັ້ນສູງ, ກະຊວງສຶກສາທິການ ແລະ ກິລາ.

**ມາດຕາ 7 ສິດ ແລະ ໜ້າທີ່ ຂອງປະທານສະພາການສຶກສາຊັ້ນສູງແຫ່ງຊາດ**

ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີ ແລະ ປະກອບຄໍາຄິດຄໍາເຫັນໃຫ້ແກ່ລັດຖະບານ ກ່ຽວກັບບັນຫາຕ່າງໆ ຕາມໜ້າທີ່ ແລະ ຂອບເຂດສິດຂອງ ສະພາການສຶກສາຊັ້ນສູງແຫ່ງຊາດ ຫຼື ຕາມການມອບໝາຍຂອງລັດຖະບານ;
2. ຊີ້ນໍາລວມວຽກງານຕ່າງໆ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດຂອງ ສະພາການສຶກສາຊັ້ນສູງແຫ່ງຊາດ;
3. ຕົກລົງອະນຸມັດຈັດກອງປະຊຸມສະພາການສຶກສາຊັ້ນສູງແຫ່ງຊາດ ພ້ອມທັງຕົກລົງເຊີນແຂກເຂົ້າຮ່ວມກອງປະຊຸມແຕ່ລະຄັ້ງ;
4. ເປັນປະທານກອງປະຊຸມສະພາການສຶກສາຊັ້ນສູງແຫ່ງຊາດທຸກຄັ້ງ ແລະ ນໍາພາກອງປະຊຸມໃຫ້ດໍາເນີນໄປຕາມແຜນການ;

5. ຕັດສິນບັນຫາໃດໜຶ່ງ ຕາມການສະເໜີຂອງກອງປະຊຸມສະພາການສຶກສາຊັ້ນສູງແຫ່ງຊາດ;
6. ຕົກລົງແຕ່ງຕັ້ງກຳມາທິການຝ່າຍຕ່າງໆຂອງສະພາການສຶກສາຊັ້ນສູງແຫ່ງຊາດ;
7. ເປັນຜູ້ຕາງໜ້າຂອງສະພາການສຶກສາຊັ້ນສູງແຫ່ງຊາດ ໃນການພົວພັນວຽກງານທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 8 ສິດ ແລະ ໜ້າທີ່ ຂອງຮອງປະທານສະພາການສຶກສາຊັ້ນສູງແຫ່ງຊາດ**

ຮອງປະທານສະພາການສຶກສາຊັ້ນສູງແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັກສາການແທນ ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ຕາມການມອບໝາຍໃນເວລາທີ່ປະທານບໍ່ຢູ່;
2. ຊີ້ນຳວຽກງານການຄົ້ນຄວ້າຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງ;
3. ເປັນປະທານກອງປະຊຸມກຳມາທິການວິຊາການທຸກຄັ້ງ ແລະ ນຳພາກອງປະຊຸມດຳເນີນໄປຕາມແຜນການ;
4. ເປັນປະທານກອງປະຊຸມໃດໜຶ່ງ ຕາມການມອບໝາຍຂອງປະທານ;
5. ເປັນຜູ້ຊ່ວຍປະກອບຄຳຄິດຄຳເຫັນໃຫ້ແກ່ປະທານ ໃນບາງວຽກງານທີ່ສຳຄັນ.

**ມາດຕາ 9 ສິດ ແລະ ໜ້າທີ່ ຂອງກຳມະການສະພາການສຶກສາຊັ້ນສູງແຫ່ງຊາດ**

ກຳມະການສະພາການສຶກສາຊັ້ນສູງແຫ່ງຊາດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເຂົ້າຮ່ວມກອງປະຊຸມສະພາການສຶກສາຊັ້ນສູງແຫ່ງຊາດທຸກຄັ້ງດ້ວຍຕົນເອງ;
2. ປະກອບຄຳເຫັນຕໍ່ບັນຫາຕ່າງໆ ທີ່ສະພາການສຶກສາຊັ້ນສູງແຫ່ງຊາດພິຈາລະນາໃນວາລະກອງປະຊຸມແຕ່ລະຄັ້ງ ຫຼື ບັນຫາຕ່າງໆທີ່ປະທານສະເໜີ;
3. ລົງຄະແນນສຽງຕັດສິນບັນຫາຕ່າງໆ.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 10 ຫຼັກການ**

ສະພາການສຶກສາຊັ້ນສູງແຫ່ງຊາດ ເຄື່ອນໄຫວວຽກງານ ຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງແກ້ໄຂບັນຫາເປັນໝູ່ຄະນະ, ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ທຸກການເຄື່ອນໄຫວ ແມ່ນອີງໃສ່ລະບຽບກົດໝາຍ ແລະ ຫຼັກການລວມຂອງລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ແບບແຜນວິທີເຮັດວຽກ**

ສະພາການສຶກສາຊັ້ນສູງແຫ່ງຊາດ ເຮັດວຽກແບບມີແຜນການ, ໂຄງການ, ການຕິດຕາມ, ກວດກາ, ປະເມີນຜົນ, ຖອດຖອນບົດຮຽນຢ່າງມີຈຸດສຸມໃນແຕ່ລະໄລຍະ, ປະຕິບັດລະບອບປະຊຸມຢ່າງເຂັ້ມງວດ. ກອງປະຊຸມສາມັນຄົບຄະນະຂອງ ສພສຊ ຈັດຂຶ້ນປີລະສອງຄັ້ງ, ໃນກໍລະນີຈຳເປັນສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ເພື່ອພິຈາລະນາບັນຫາທີ່ຈຳເປັນ. ກອງປະຊຸມດຳເນີນຕາມຫຼັກການລວມສູນປະຊາທິປະໄຕ, ຖືເອົາສຽງສອງສ່ວນສາມ (2/3) ຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມເປັນອັນຕັດສິນ. ການດຳເນີນກອງປະຊຸມແຕ່ລະ

ຖົ້ງ ຕ້ອງປະກອບດ້ວຍສະມາຊິກທີ່ເຂົ້າຮ່ວມສອງສ່ວນສາມ (2/3) ຂອງສະມາຊິກທັງໝົດຂອງ ສພສຊ ຈຶ່ງສາມາດເປີດກອງປະຊຸມໄດ້.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ**

ງົບປະມານນຳໃຊ້ສຳລັບການເຄື່ອນໄຫວຂອງ ສະພາການສຶກສາຊັ້ນສູງແຫ່ງຊາດ ໄດ້ມາຈາກງົບປະມານປະຈຳປີຂອງກະຊວງສຶກສາທິການ ແລະ ກິລາ, ການປະກອບສ່ວນຂອງສະຖາບັນການສຶກສາຊັ້ນສູງ, ການຊ່ວຍເຫຼືອ ແລະ ການຮ່ວມມືຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ.

**ມາດຕາ 13 ຕາປະທັບ ແລະ ກາໝາຍ**

ສະພາການສຶກສາຊັ້ນສູງແຫ່ງຊາດ ມີຕາປະທັບຂອງຕົນ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

ສະພາການສຶກສາຊັ້ນສູງແຫ່ງຊາດ ມີກາໝາຍສະເພາະເປັນຂອງຕົນເອງ ໂດຍແມ່ນ ສະມາຊິກສະພາການສຶກສາຊັ້ນສູງແຫ່ງຊາດ ເປັນຜູ້ຮັບຮອງດ້ວຍຄະແນນສຽງຢ່າງໜ້ອຍ 2/3 ຂອງຈຳນວນສະມາຊິກທັງໝົດ.

**ມາດຕາ 14 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ຄວາມຮັບຜິດຊອບລະອຽດໃຫ້ແກ່ ຫ້ອງການສະພາການສຶກສາຊັ້ນສູງແຫ່ງຊາດ.

ມອບໃຫ້ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ເປັນຜູ້ກຳນົດລະບຽບການເຄື່ອນໄຫວລະອຽດຂອງສະພາການສຶກສາຊັ້ນສູງແຫ່ງຊາດ ພ້ອມທັງແຕ່ງຕັ້ງຄະນະກຳມາທິການຝ່າຍຕ່າງໆ ຕາມຄວາມເໝາະສົມ.

**ມາດຕາ 15 ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ ແລະ ກິລາ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ, ສະຖາບັນການສຶກສາຊັ້ນສູງທັງພາກລັດ, ເອກະຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 16 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**